ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ ເລກທີ 470 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2021

# ແຈ້ງການ

ເຖິງ : - ບັນດາທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຜູ້ອຳນວຍການສະຖາບັນ, ສຳນັກພິມສຶກສາ ແລະ ກິລາ ແລະ ສູນ

- ທ່ານ ອະທິການບໍດີມະຫາວິທະຍາໄລ 4 ແຫ່ງ
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ
- ທ່ານ ປະທານສະມາຄົມການສຶກສາພາກເອກະຊົນ
- ທ່ານ ຜູ້ອຳນວຍການສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ

ເລື່ອງ: ການສືບຕໍ່ເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ໃນໄລຍະ ວັນທີ 21 ພຶດສະພາ ຫາ 04 ມິຖຸນາ 2021 ຂອງຂະແໜງການສຶກສາ ແລະ ກິລາ.

- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ-19;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021;

ເພື່ອເປັນການສືບຕໍ່ເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ໂຄວິດ-19 ທີ່ຂະແໜງການສຶກສາ ແລະ ກິລາ ໃນຂອບເຂດທົ່ວປະເທດ.

**ຫົວໜ້າຄະນະສະເພາະກິດ ກະຊວງສຶກສາທິການ ແລະ ກິລາ ອອກແຈ້ງການ ດັ່ງນີ້:**

1. ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ ທຸກຂັ້ນ, ພະນັກງານ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາທຸກຄົນ ສືບຕໍ່ເພີ່ມທະວີປະຕິບັດມາດຕະການຕ່າງໆທີ່ລະບຸໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄຳແນະນຳຂອງຄະນະສະເພາະກິດຂັ້ນສູນກາງ, ຄຳສັ່ງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ຄຳສັ່ງເພີ່ມເຕີມ ແລະ ແຈ້ງການຂອງຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ແລະ ຄຳສັ່ງ-ຄຳແນະນຳຂອງຄະນະສະເພາະກິດຂັ້ນແຂວງ/ນະຄອນຫຼວງ **ອອກໄປຕື່ມອີກ 15 ວັນ** ຢ່າງເຂັ້ມງວດ ນັບແຕ່ວັນທີ 21 ພຶດສະພາ - 04 ມິຖຸນາ 2021 ແລະ ມອບໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;
2. ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ປະສານສົມທົບກັບຄະນະສະເພາະກິດຂັ້ນແຂວງ/ນະຄອນຫຼວງ ຖ້າ ແຂວງ/ນະຄອນຫຼວງ ຫຼື ເມືອງ/ນະຄອນ ທີ່ບໍ່ມີກໍລະນີຜູ້ຕິດເຊື້ອໂຄວິດ-19 ໃໝ່ໃນຊຸມຊົນ ໃນ 14 ວັນຜ່ານມາ (ແຕ່ວັນທີ 6 ເຖິງວັນທີ 20 ພຶດສະພາ 2021) ແລະ ສາມາດຈຳກັດຄົນທີ່ເດີນທາງມາຈາກເຂດທີ່ມີການແຜ່ລະບາດໄດ້ ແລະ ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ ແລະ ນະຄອນ

สแกนด้วย CamScanner

ຫຼວງ, ແມ່ນອະນຸຍາດໃຫ້ເປີດການຮຽນ-ການສອນໃນສະຖານການສຶກສາ ແລະ ສູນຝຶກອົບຮົມວິຊາຊີບໄດ້ ໂດຍມີລາຍລະອຽດດັ່ງນີ້:

2.1 ການສຶກສາກ່ອນໄວຮຽນ: ໃຫ້ສະຖານການສຶກສາກ່ອນໄວຮຽນທັງພາກລັດ ແລະ ເອກະຊົນ ສືບຕໍ່ໂຈະການຮຽນ-ການສອນ ແຕ່ວັນທີ 21 ພຶດສະພາ ເຖິງ 04 ມິຖຸນາ 2021, ເພາະຍັງບໍ່ສາມາດປະຕິບັດມາດຕະການຮັກສາໄລຍະຫ່າງ, ລ້າງມືເປັນປະຈໍາ ແລະ ການຊ່ວຍຕົນເອງຍັງບໍ່ທັນໄດ້ເທື່ອ ຫຼື ໃຫ້ຄະນະສະເພາະກິດຂັ້ນແຂວງ ແລະ ນະຄອນຫຼວງ ພິຈາລະນາຕາມສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ;

2.2 ສາມັນສຶກສາ ແລະ ການສຶກສານອກໂຮງຮຽນ: ຖ້າບໍ່ມີການລະບາດໃນຊຸມຊົນ 14 ວັນຜ່ານມາ ແມ່ນອະນຸຍາດໃຫ້ເປີດຮຽນຄືນແຕ່ຊັ້ນປະຖົມສຶກສາປີທີ 5, ມັດທະຍົມສຶກສາ ປີທີ 4 ແລະ ມັດທະຍົມສຶກສາ ປີທີ 7 ໃນວັນທີ 24 ພຶດສະພາ 2021, ສະເໜີໃຫ້ສ້າງແຜນລະອຽດໃນການປະຕິບັດມາດຕະການສະກັດກັ້ນ, ປ້ອງກັນພະຍາດໂຄວິດ-19 ຢ່າງເຄັ່ງຄັດ ແລ້ວສະເໜີຕໍ່ຄະນະສະເພາະກິດ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ພິຈາລະນາອະນຸມັດເປີດຮຽນ ລວມທັງຂັ້ນຮຽນທີ່ເຫຼືອ; ການຈັດການຮຽນ-ການສອນ ແມ່ນໃຫ້ຄັດຈ້ອນບົດຮຽນທີ່ຍັງບໍ່ທັນຈົບຕາມຫຼັກສູດ ເນັ້ນເນື້ອໃນຫຼັກ ແລະ ສອນທົດແທນຄືນ ເພື່ອກະກຽມການສອບເສັງ. ການສອບເສັງແມ່ນໃຫ້ປະຕິບັດຕາມແຈ້ງການຂອງກົມສາມັນສຶກສາ ແລະ ກົມການສຶກສານອກໂຮງຮຽນ.

2.3 ອາຊີວະສຶກສາ, ວິທະຍາໄລ, ສະຖາບັນ ແລະ ມະຫາວິທະຍາໄລ ທີ່ຢູ່ທ້ອງຖິ່ນຕ່າງໆທີ່ບໍ່ມີການລະບາດໃນຊຸມຊົນ 14 ວັນຜ່ານມາ: ສະຖານການສຶກສາໃດທີ່ເຫັນວ່າມີຄວາມປອດໄພຈາກການຕິດເຊື້ອ, ມີຄວາມພ້ອມໃນການເປີດຮຽນຄືນ, ນັກສຶກສາທັງໝົດສາມາດກັບມາຮຽນຄືນໄດ້ ແມ່ນໃຫ້ເປີດຮຽນຄືນໃນສະຖານການສຶກສາ. ແຕ່ຕ້ອງໄດ້ເອົາໃຈໃສ່ຕໍ່ນັກສຶກສາທີ່ກັບມາຈາກຕ່າງແຂວງ ຫຼື ນັກສຶກສາທີ່ພັກອາໄສນໍາຍາດພີ່ນ້ອງໃນເຂດທີ່ມີຄວາມສ່ຽງສູງ. ໂດຍປະຕິບັດມາດຕະການກວດວັດແທກອຸນຫະພູມ, ຮັກສາໄລຍະຫ່າງ, ໃສ່ຜ້າປິດປາກ-ດັງ, ລ້າງມືດ້ວຍເຈວ ແລະ ສະບູ ເປັນປະຈໍາ.

2.4 ສໍາລັບນະຄອນຫຼວງວຽງຈັນ ແລະ ບາງທ້ອງຖິ່ນທີ່ຍັງມີການລະບາດແມ່ນໃຫ້ສືບຕໍ່ໂຈະການຮຽນ-ການສອນຊົ່ວຄາວ ທຸກຊັ້ນ ທຸກສາຍ ໃນສະຖານການສຶກສາ ເຖິງວັນທີ 04 ມິຖຸນາ 2021;

2.5 ສູນຝຶກອົບຮົມວິຊາຊີບ: ສູນທີ່ຢູ່ທ້ອງຖິ່ນຕ່າງໆທີ່ບໍ່ມີການລະບາດໃນຊຸມຊົນ 14 ວັນ ຜ່ານມາ ແມ່ນໃຫ້ເປີດຮຽນຄືນໃນສູນ ແຕ່ຕ້ອງປະຕິບັດມາດຕະການປ້ອງກັນໂຄວິດ-19 ໃຫ້ເຂັ້ມງວດ;

2.6 ສະຖານການສຶກສາໃດທີ່ໄດ້ຮັບການອະນຸຍາດໃຫ້ເປີດ, ແມ່ນໃຫ້ຈັດບ່ອນນັ່ງໃຫ້ນັກຮຽນ-ນັກສຶກສາຫ່າງນັ່ງຮຽນ 1 ຄົນຕໍ່ໂຕະ, ຖ້າເຫຼືອຫ້ອງແມ່ນໃຫ້ຈັດເປັນຫຼາຍຫ້ອງ, ເຮັດການວັດແທກອຸນຫະພູມທຸກຄົນທີ່ເຂົ້າໃນສະຖານການສຶກສາ, ຖ້າມີຄູ-ອາຈານ ຫຼື ນັກຮຽນ-ນັກສຶກສາຫາກເຈັບເປັນກະທັນຫັນໃນເວລາຮຽນ ແມ່ນໃຫ້ແຍກຜູ້ທີ່ເຈັບເປັນອອກຈາກຄົນອື່ນ ແລະ ໃຫ້ໂທຫາຜູ້ປົກຄອງ, ສຸກສາລາ ຫຼື ໂຮງໝໍທີ່ຢູ່ໃກ້ ເພື່ອຮັບໄປປິ່ນປົວໃຫ້ທັນການ;

2.7 ສະຖານການສຶກສາທີ່ຈະເປີດຮຽນຄືນໃຫ້ມີການຂ້າເຊື້ອ ແລະ ເຮັດອະນາໄມ ໂດຍສະເພາະສະຖານການສຶກສາທີ່ຖືກໃຊ້ເປັນສູນຈໍາກັດບໍລິເວນ ແລະ ສະຖານທີ່ເພື່ອກວດຫາເຊື້ອໂຄວິດ-19 ໂດຍໃຫ້ປະສານກັບຄະນະສະເພາະຂັ້ນຂອງຕົນເພື່ອດໍາເນີນການ;

3. ສໍາລັບເຂດໃດ ຫຼື ສະຖານການສຶກສາໃດ ທີ່ຍັງບໍ່ທັນເປີດການຮຽນ-ການສອນໃນສະຖານການສຶກສາ ແມ່ນໃຫ້ສືບຕໍ່ຈັດການຮຽນ-ການສອນທາງໄກ ຜ່ານທາງໂທລະພາບການສຶກສາ-ກິລາ, ວິທະຍຸ, ນໍາໃຊ້ **ຄັງປັນຍາລາວ**, ນໍາໃຊ້ປຶ້ມແບບຮຽນເພື່ອຮຽນຢູ່ເຮືອນ ແລະ ຮູບແບບຕ່າງໆທີ່ເຫັນວ່າເໝາະສົມ; ຖ້າໂຮງຮຽນເອກະຊົນ ຫຼື ເອກະຊົນນາໆຊາດ ທີ່ສາມາດດໍາເນີນການຮຽນ-ການສອນທາງໄກຄົບຕາມຫລັກສູດໄດ້ ແມ່ນໃຫ້ດໍາເນີນການສອບເສັງຕາມໂຄງການຫລັກສູດຂອງໂຮງຮຽນທີ່ວາງໄວ້.

สแกนด้วย CamScanner

4. ອະນຸຍາດໃຫ້ອອກກຳລັງກາຍ ແລະ ຫຼິ້ນກິລາກາງແຈ້ງ ໃນເຂດທີ່ບໍ່ມີກໍລະນີຜູ້ຕິດເຊື້ອໂຄວິດ-19 ໃໝ່ໃນຊຸມຊົນ ໃນ 14 ວັນຜ່ານມາ ດັ່ງນີ້:

   4.1 ອະນຸຍາດໃຫ້ອອກກຳລັງກາຍຢູ່ສວນສາທາລະນະ ຫຼື ສະຖານທີ່ກາງແຈ້ງທີ່ເໝາະສົມ ເຊັ່ນ: ແລ່ນ, ຍ່າງ ແລະ ຂີ່ລົດຖີບ ແຕ່ຕ້ອງໃສ່ຜ້າປິດປາກ-ດັງ, ຮັກສາໄລຍະຫ່າງບໍ່ໃຫ້ຫຼຸດ 2 ແມັດ, ບໍ່ໃຫ້ຈັດກຸ່ມກັນ ລົມທະນາກັນ ຫຼື ເຮັດກິດຈະກຳອື່ນໆ ເກີນ 2 ຄົນ;

   4.2 ອະນຸຍາດໃຫ້ຫຼິ້ນກິລາກາງແຈ້ງຈຳນວນໜຶ່ງ ປະກອບມີ: ກິລາກ໊ອບ, ເທັນນິສ, ບານເຕະ ແລະ ອື່ນໆ; ໃຫ້ເຈົ້າຂອງ ຫຼື ຜູ້ປະກອບການ ສ້າງແຜນລະອຽດໃນການປະຕິບັດມາດຕະການສະກັດກັ້ນ, ປ້ອງກັນ ພະຍາດໂຄວິດ-19 ຢ່າງເຄັ່ງຄັດ ແລ້ວສະເໜີຕໍ່ຄະນະສະເພາະກິດ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ພິຈາລະນາອະນຸມັດ ເປັນແຕ່ລະກໍລະນີ;

5. ໃຫ້ລະດົມ ແລະ ຈັດຕັ້ງການສັກວັກຊີນໃຫ້ແກ່ຜູ້ບໍລິຫານ, ພະນັກງານ ແລະ ຄູ-ອາຈານ ໃຫ້ສຳເລັດໂດຍໄວ ໂດຍສະເພາະແມ່ນຄູ-ອາຈານ ທີ່ເປັນຜູ້ສຳພັດໃກ້ຊິດກັບນັກຮຽນ-ນັກສຶກສາ ຈຳນວນຫຼາຍ ທັງນີ້ເພື່ອເປັນການສ້າງຄວາມໝັ້ນໃຈໃຫ້ພໍ່ແມ່-ຜູ້ປົກຄອງ ແລະ ສັງຄົມ;

6. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ສືບຕໍ່ປະສານສົມທົບກັບຄະນະສະເພາະກິດ ຂັ້ນແຂວງ/ນະຄອນຫຼວງ ເພື່ອເຝົ້າລະວັງ, ຕິດຕາມ ແລະ ປະເມີນຄວາມສ່ຽງການແຜ່ລະບາດຂອງພະຍາດໂຄວິດ-19 ໃນຂອບເຂດຄວາມຮັບຜິດຊອບຂອງຕົນເປັນປົກກະຕິ ເພື່ອສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂສະພາບການລະບາດໃຫ້ທັນການ;

7. ໃຫ້ຜູ້ບໍລິຫານການສຶກສາ ແລະ ກິລາ, ຄູ-ອາຈານ ແລະ ນັກຮຽນ-ນັກສຶກສາ ຈົ່ງສືບຕໍ່ມີສະຕິໃນການຮັບຂໍ້ມູນຂ່າວສານຈາກສື່ອອນລາຍ ໂດຍສະເພາະແມ່ນຂ່າວທີ່ບໍ່ມີມູນຄວາມຈິງ ຫ້າມບໍ່ໃຫ້ເຜີຍແຜ່ ຫຼື ແຊຕໍ່ຢ່າງເດັດຂາດ, ໃຫ້ຕິດຕາມຂ່າວສານຈາກສື່ອອນລາຍທີ່ເຊື່ອຖືໄດ້ຄື: **ສູນຂ່າວສານການແພດສຸຂະສຶກສາ (ສະເພາະຂໍ້ມູນກ່ຽວກັບການແຜ່ລະບາດຂອງພະຍາດໂຄວິດ-19)**; ສຳລັບຂໍ້ມູນຂ່າວສານສຶກສາ ແລະ ກິລາ ໃຫ້ຕິດຕາມຂ່າວຈາກ: **Edu-Sport TV online ແລະ ສູນໂຄສະນາຂ່າວສານການສຶກສາ ແລະ ກິລາ**; ຖ້າມີກໍລະນີຮີບດ່ວນໃຫ້ປະສານ ແລະ ລາຍງານຫາຫ້ອງການກະຊວງສຶກສາທິການ ແລະ ກິລາ, ຈຸດປະສານງານຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ ໂທ/ແຟັກ: 021 254702, ຫຼື whatsapp 020 22475552, 020 54922051, ອີເມວ:sungluam210@gmail.com;

8. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ **ວັນທີ 20 ພຶດສະພາ 2021 ຫາ ເວລາ 24:00 ໂມງ ຂອງວັນທີ 04 ມິຖຸນາ 2021.** ໃນກໍລະນີທີ່ມີການປ່ຽນແປງ ກະຊວງສຶກສາທິການ ແລະ ກິລາ ຈະແຈ້ງໃຫ້ຊາບ ເປັນແຕ່ລະໄລຍະ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດກະຊວງສຶກສາທິການ ແລະ ກິລາ**

**ນ.ສັນທະລີ ສິຣິພົງພັນ**

สแกนด้วย CamScanner